ບົດບັນທຶກຜົນກອງປະຊຸມແຜນການຮ່ວມມືລະຫວ່າງ ກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ຄັ້ງທີ 6

ລະຫວ່າງວັນທີ 04-05 ກຸມພາ 2015

ທີ່ໂຮງແຮມອິນເຕີຄອນຕີເນັນໂທ, ບາງກອກ, ປະເທດໄທ

****************************************

1. ກອງປະຊຸມແຜນການຮ່ວມມືລະຫວ່າງກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ຄັ້ງທີ 6 ຈັດຂຶ້ນໃນລະຫວ່າງວັນທີ 04-05 ກຸມພາ 2015 ທີ່ໂຮງແຮມອິນເຕີຄອນຕີເນັນໂທ, ບາງກອກ, ປະເທດໄທ

2. ທ່ານ ນາງ ເຂັມມະນີ ພົນເສນາ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ເປັນ ປະທານຮ່ວມຝ່າຍລາວ ແລະ ທ່ານ ພົນເອກ ຊັດໄຊ ສາຣິກັນຍະ ລັດຖະມົນຕີວ່າການ ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ເປັນປະທານຮ່ວມຝ່າຍໄທ. ລາຍຊື່ຄະນະຜູ້ແທນທັງສອງຝ່າຍ ຕາມເອກະສານຄັດຕິດ 1 ແລະ 2 ຕາມລຳດັບ

3. ປະທານຮ່ວມຂອງທັງສອງຝ່າຍສະແດງຄວາມຍິນດີທີ່ສາຍພົວພັນທາງເສດຖະກິດການຄ້າ ແລະ ການລົງທຶນລະຫວ່າງ ສປປ ລາວ ກັບ ຣາຊະອານາຈັກໄທ ໄດ້ມີການພັດທະນາໃນຫຼາຍໆດ້ານ ໂດຍມູນຄ່າການຄ້າ ແລະ ການລົງທຶນສອງຝ່າຍໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍັງມີໂອກາດໃນການພັດທະນາການຮ່ວມມືທາງການຄ້າ ແລະ ການລົງທຶນຕື່ມອີກຢ່າງຫຼວງຫຼາຍ.

4. ສອງຝ່າຍສະແດງຄວາມຍິນດີຕໍ່ຜົນສຳເລັດໃນການປຶກສາຫາລື ລະຫວ່າງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ທ່ານ ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ໃນການຢ້ຽມຢາມ ສປປ ລາວ ຢ່າງ ເປັນທາງການຂອງທ່ານນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ໃນລະຫວ່າງວັນທີ 26-27 ພະຈິກ 2014 ແລະ ເຫັນດີຈະນຳຜົນຂອງການປຶກສາຫາລືກ່ຽວກັບການຄ້າ ແລະ ການລົງທຶນ, ເຊັ່ນວ່າ: ການສົ່ງເສີມການລົງທຶນ ລະຫວ່າງສອງຝ່າຍ, ການຍົກລະດັບດ່ານຊາຍແດນ, ການເຊື່ອມໂຍງໃນພາກພື້ນ, ແລະ ການພັດທະນາເນື້ອທີ່ຊາຍແດນມາປຶກສາຫາ ລືກັບໜ່ວຍງານກ່ຽວຂ້ອງ ແລະ ຮ່ວມກັນຊຸກຍູ້ຜັນຂະຫຍາຍເພື່ອໃຫ້ເກີດຜົນ ແລະ ເກີດປະໂຫຍດແກ່ທັງສອງປະເທດໃນຕໍ່ໜ້າ.

## I. ເປົ້າໝາຍການຄ້າ

5. ສອງຝ່າຍທົບທວນຄືນເປົ້າໝາຍມູນຄ່າການຄ້າທີ່ຕັ້ງໄວ້ຮ່ວມກັນໃນກອງປະຊຸມຄັ້ງທີ່ຜ່ານມາວ່າ ມູນຄ່າການຄ້າສອງຝ່າຍຄາດຄະເນອາດຈະຂະຫຍາຍໂຕໄດ້ເຖິງ 8,000 ລ້ານໂດລາສະຫະລັດ ໃນປີ 2015 ແຕ່ເນື່ອງຈາກ ອີງຕາມສະພາບເສດຖະກິດຂອງສອງປະເທດມີການຂະຫຍາຍຕົວຊ້າ ເຮັດໃຫ້ມີຜົນກະທົບຕໍ່ການຄ້າລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ ຈຶ່ງເຮັດໃຫ້ການຂະຫຍາຍຕົວໃນປະລິມານບໍ່ຫຼາຍ ໂດຍການຄ້າສອງຝ່າຍ ໃນປີ 2014 ມີມູນຄ່າ 5,443.11 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 6.34% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ໂດຍການນຳເຂົ້າຂອງລາວຈາກໄທມີມູນຄ່າ 4,032.55 ລ້ານໂດລາສະຫະລັດ ແລະ ການສົ່ງອອກຈາກ ສປປ ລາວ ໄປ ໄທ ແມ່ນ 1,410.56 ລ້ານໂດລາສະຫະລັດ. ການຄາດຄະເນເສດຖະກິດໃນປີ 2015 ຂອງ ໄທມີແນວໂນ້ມປັບຕົວໃນທິດທາງທີ່ດີຂຶ້ນ ແລະ ເສດຖະກິດຂອງ ລາວ ຍັງຈະຂະຫຍາຍຕົວໃນອັດຕາທີ່ສູງ ຈຶ່ງຄາດວ່າຈະເປັນປັດໄຈບວກທີ່ສົ່ງຜົນເຮັດ

ໃຫ້ການຄ້າສອງຝ່າຍຂະຫຍາຍຕົວໃນອັດຕາເພີ່ມຂຶ້ນ ແລະ ອາດຈະສາມາດບັນລຸເປົ້າໝາຍທີ່ເຄີຍຕັ້ງໄວ້, ສອງຝ່າຍສະແດງເຈດຈຳນົງທີ່ຈະຮ່ວມກັນສົ່ງເສີມ ແລະ ຊຸກຍູ້ໃຫ້ມູນຄ່າການຄ້າສອງຝ່າຍຂະຫຍາຍຕົວເພີ່ມຂຶ້ນລະດັບ 15-20% ຕໍ່ປີ ນັບແຕ່ປີ 2015 ເຖິງປີ 2017.

6. ເພື່ອເພີ່ມມູນຄ່າການຄ້າຂອງສອງປະເທດ ໃຫ້ໄດ້ຕາມເປົ້າໝາຍທີ່ໄດ້ລະບຸໄວ້ຢູ່ໃນຂໍ້ 5 ຂ້າງເທິງນັ້ນ ສອງຝ່າຍຈະດຳເນີນການດັ່ງຕໍ່ໄປນີ້:

II. **ການອຳນວຍຄວາມສະດວກທາງການຄ້າ ແລະ ການລົງທຶນ**

(1). **ການອຳນວຍຄວາມສະດວກໃນການນຳເຂົ້າ ແລະ ສົ່ງອອກສິນຄ້າກະສິກຳ**

7. ຝ່າຍລາວສະເໜີວ່າທັງສອງຝ່າຍຄວນຈະອຳນວຍຄວາມສະດວກແກ່ການນຳເຂົ້າ ແລະ ສົ່ງອອກສິນຄ້າກະສິກຳທີ່ມີແຫຼ່ງກຳເນີດຈາກສອງປະເທດ ໂດຍບໍ່ຈຳກັດດ້ານປະລິມານ ແລະ ບໍ່ກຳນົດໄລຍະເວລານຳເຂົ້າສິນຄ້າ ໂດຍສະເພາະການນຳເຂົ້າໝາກສາລີລ້ຽງສັດຂອງລາວໄປໄທ ໂດຍໃຫ້ສາມາດນຳເຂົ້າໄດ້ເປັນປົກກະຕິຕະຫຼອດປີ ແລະ ບໍ່ຜູກຂາດສະເພາະໃຫ້ນຳເຂົ້າໂດຍຜ່ານອົງການຄັງສິນຄ້າເທົ່ານັ້ນ. ພ້ອມນີ້, ຝ່າຍໄທແຈ້ງໃຫ້ຊາບວ່າ ລະຫວ່າງ ປີ 2015-2017 ຜູ້ນຳເຂົ້າທົ່ວໄປສາມາດນຳເຂົ້າລະຫວ່າງວັນທີ 1 ກຸມພາ- 31 ສິງຫາ ຂອງແຕ່ລະປີ ແລະ ອົງການຄັງສິນຄ້າສາມາດນຳເຂົ້າໄດ້ຕະຫຼອດ ປີ. ນອກຈາກນີ້ ຝ່າຍລາວແຈ້ງວ່າ ສປປ ລາວ ມີຜົນຜະລິດນ້ຳຕານຫຼາຍ ແລະ ຂໍໃຫ້ຝ່າຍໄທພິຈາລະນາ ໃນການນຳເຂົ້ານ້ຳຕານຊາຍດິບ ຈາກ ສປປ ລາວ ໂດຍຝ່າຍໄທແຈ້ງໃຫ້ຊາບວ່າ ການພິຈາລະນານຳເຂົ້ານ້ຳຕານຊາຍດິບໄປໄທເປັນອຳນາດໜ້າທີ່ຂອງຄະນະກຳມະທິການອ້ອຍ ແລະ ນ້ຳຕານຊາຍ ແລະ ຈະປະສານໜ່ວຍງານທີ່ກ່ຽວຂ້ອງໃນເລື່ອງດັ່ງກ່າວ, ແລ້ວຈະແຈ້ງຜົນໃຫ້ຝ່າຍລາວຊາບໃນເວລາອັນສົມຄວນ

(2) **ການຈັດຕັ້ງປະຕິບັດການແຈ້ງພາສີຢູ່ຈຸດດຽວ(Single Stop Inspection-SSI)**

8. ຝ່າຍລາວສະເໜີຝ່າຍໄທພິຈາລະນາເລັ່ງລັດຂັ້ນຕອນພາຍໃນປະເທດເພື່ອໃຫ້ສາມາດດຳເນີນການດ້ານພາສີເພື່ອຈັດຕັ້ງປະຕິບັດການແຈ້ງພາສີ ຢູ່ຈຸດດຽວ (Single Stop Inspection-SSI) ໂດຍໄວ ຊຶ່ງຈະຊ່ວຍໃຫ້ການຄ້າລະຫວ່າງກັນ ມີຄວາມວ່ອງໄວເພີ່ມຂຶ້ນ.

(3) **ການຍົກລະດັບດ່ານຊາຍແດນ**

9. ສອງຝ່າຍຍິນດີທີ່ຈະປະຕິບັດຕາມຜົນການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຂອງ ທ່ານ ນາຍົກ ລັດຖະມົນຕີແຫ່ງ ຣາຊະອານາຈັກໄທ ຊຶ່ງສອງຝ່າຍໄດ້ຕົກລົງເຫັນດີໃຫ້ຈັດກອງປະຊຸມຄະນະກຳມະການຮ່ວມພິຈາ ລະນາ ການເປີດຈຸດຜ່ານແດນ ໄທ-ລາວ ຄັ້ງທີ 2 ເພື່ອຮ່ວມກັນພິຈາລະນາເລື່ອງການເປີດຈຸດຜ່ານແດນຖາວອນເພີ່ມຂຶ້ນ. ຝ່າຍໄທໄດ້ຍົກລະດັບດ່ານປະເພນີພູດູ່ (ຈຸດຜ່ອນປົນການຄ້າ) ບ້ານມ່ວງເຈັດຕົ້ນ, ອຳເພີບ້ານໂຄກ, ຈັງຫວັດອຸດຕະຣະດິດ ຂຶ້ນເປັນດ່ານສາກົນ (ຈຸດຜ່ານແດນຖາວອນ) ໃນເດືອນພຶດສະພາ 2013 ແລະ ຝ່າຍລາວຈະປະສານກັບພາກສ່ວນກ່ຽວຂ້ອງກ່ຽວກັບການຈະຍົກລະດັບດ່ານທ້ອງຖິ່ນພູດູ່, ບ້ານຜາແກ້ວ, ເມືອງປາກລາຍ, ແຂວງໄຊຍະບູລີ ຂຶ້ນເປັນດ່ານສາກົນ ໃນໄລຍະຕົ້ນປີ 2015.

10. ສອງຝ່າຍສະແດງຄວາມຍິນດີຕໍ່ການເປີດດ່ານສາກົນຂົວມິດຕະພາບແຫ່ງທີ່ 4 ອຳເພີ ຊຽງຂອງ ຈັງຫວັດ ຊຽງລາຍ ໃນວັນທີ 11 ທັນວາ 2013.

11. ຝ່າຍລາວ ກະກຽມຄວາມພ້ອມໃນການຍົກລະດັບດ່ານທ້ອງຖິ່ນ ຈຳນວນ 02 ແຫ່ງຄື:

1) ດ່ານທ້ອງຖິ່ນບ້ານປາກຕະພານ, ເມືອງລະຄອນເພັງ, ແຂວງສາລະວັນ ຂຶ້ນເປັນດ່ານສາກົນ, ຊຶ່ງກົງກັນຂ້າມກັບ ດ່ານ ສາກົນປາກແຊງ (ຈຸດຜ່ານແດນຖາວອນ) ອຳເພີນາຕານ,ຈັງຫວັດອຸບົນຣາຊະທານີ

2) ດ່ານທ້ອງຖິ່ນບ້ານປາງມອນ, ເມືອງຄອບ, ແຂວງໄຊຍະບູລີ ຂຶ້ນເປັນດ່ານສາກົນ ແລະ ດ່ານປະເພນີບ້ານຮວກ (ຈຸດຜ່ອນປົນທາງການຄ້າ), ອຳເພີພູຊ້າງ, ຈັງຫວັດພະເຢົາ ຂຶ້ນເປັນຈຸດຜ່ານແດນຖາວອນ.

12. ສອງຝ່າຍໄດ້ຂະຫຍາຍວັນເວລາ ເປີດ-ປິດ ດ່ານທ້ອງຖິ່ນບ້ານຫວາຍ, ເມືອງທ່າພະບາດ, ແຂວງບໍລິຄຳໄຊ ແລະ ດ່ານປະເພນີບ້ານເປົ້ງຈານ (ຈຸດຜ່ອນປົນທາງການຄ້າ), ອຳເພີລັດຕະນະວາປີ,ຈັງຫວັດໜອງຄາຍ ຈາກ 02 ວັນ ເປັນ 03 ວັນ ຕໍ່ອາທິດ ໃນປີ 2014.

13. ສອງຝ່າຍກຳລັງດຳເນີນການເພື່ອຍົກລະດັບດ່ານປະເພນີບ້ານທ່າສະອາດ, ເມືອງປາກກະດິງ, ແຂວງບໍລິຄຳໄຊ ເປັນດ່ານສາກົນ ແລະ ຍົກລະດັບດ່ານປະເພນີບ້ານໂພໄຊ (ຈຸດຜ່ອນປົນທາງການຄ້າ), ຕຳບົນໄຜ່ລ້ອມ, ອຳເພີບ້ານແພງ, ຈັງຫວັດນະຄອນພະນົມ ເປັນດ່ານສາກົນ

14. ສອງຝ່າຍສືບຕໍ່ພິຈາລະນາເປີດດ່ານປະເພນີບ້ານແຄນ, ເມືອງທົ່ງມີໄຊ, ແຂວງໄຊຍະບູລີ ກັບດ່ານປະເພນີບ້ານນ້ຳປີ້ (ຈຸດຜ່ອນປົນທາງການຄ້າ), ອຳເພີວຽງສາ, ຈັງຫວັດນ່ານ.

15. ຝ່າຍລາວຮັບຊາບວ່າ ຝ່າຍໄທໄດ້ເພີ່ມວັນເປີດຈຸດຜ່ອນປົນບ້ານໃໝ່ຊາຍແດນ ອຳເພີ ສອງແຄ ຈັງຫວັດນ່ານ ຈາກເປີດສະເພາະວັນພຸດ ແລະ ວັນອາທິດຕໍ່ອາທິດ ເປັນ ທຸກວັນພຸດ, ວັນພະຫັດ ແລະ ວັນອາທິດ ແລະ ສະເໜີຝ່າຍລາວພິຈາລະນາໃນການກຳນົດວັນເປີດຈຸດຜ່ອນປົນໃຫ້ກົງກັບຝ່າຍໄທ.

16. ສອງຝ່າຍເຫັນດີຈະພິຈາລະນາຄວາມເປັນໄປໄດ້ໃນການເປີດ/ຍົກລະດັບດ່ານເພີ່ມຂຶ້ນໃນອານາຄົດ ໂດຍຄຳນຶ່ງເຖິງປັດໄຈ ດ້ານຄວາມໝັ້ນຄົງທາງເສດຖະກິດ ແລະ ສັງຄົມ ເພື່ອສະໜັບສະໜູນ ແລະ ຮອງຮັບການຂະຫຍາຍຕົວທາງການຄ້າ ການລົງທຶນ ແລະ ການທ່ອງທ່ຽວລະຫວ່າງກັນ.

## (4) ການເອົາວີຊາກັບດ່ານກວດຄົນເຂົ້າເມືອງ (Visa on Arrival)

17. ຝ່າຍໄທແຈ້ງໃຫ້ຊາບວ່າ ເພື່ອເປັນການສະໜັບສະໜູນການຄ້າ ການທ່ອງທ່ຽວ, ແລະ ເສດຖະກິດ ຢູ່ບໍລິເວນຊາຍແດນຂອງໄທ ກັບ ລາວ ແລະ ການກຽມຄວາມພ້ອມເພື່ອຮອງຮັບການເຂົ້າສູ່ປະຊາຄົມອາຊຽນ, ໄທ ໄດ້ ອອກປະກາດເພີ່ມເຕີມກ່ຽວກັບ ດ່ານກວດຄົນເຂົ້າເມືອງໃນການຂໍຮັບການວີຊາກັບດ່ານ ຫລື Visa on Arrival ຈຳນວນ 10 ດ່ານ ຊຶ່ງມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 10 ທັນວາ 2014 ໂດຍເປັນດ່ານຊາຍແດນຂອງໄທ ກັບ ລາວ ເຖິງ 6 ແຫ່ງ ໄດ້ແກ່ 1) ດ່ານກວດຄົນເຂົ້າເມືອງໜອງຄາຍ ຢູ່ ບໍລິເວນເຂດທ່າເຮືອຕາມຊາຍຝັ່ງແມ່ນ້ຳຂອງ; 2) ດ່ານກວດຄົນ ເຂົ້າ ເມືອງບຶງການ; 3) ດ່ານກວດຄົນເຂົ້າເມືອງພິບູນມັງສາຫານ (ຊ່ອງເມັກ); 4) ດ່ານກວດຄົນເຂົ້າເມືອງທ່າລີ່ ຈ.ເລີຍ; 5) ດ່ານກວດຄົນເຂົ້າເມືອງນະຄອນພະນົມ ( ຂົວມິດຕະພາບໄທ-ລາວ ແຫ່ງທີ 03) ແລະ 6) ດ່ານກວດຄົນເຂົ້າເມືອງ ນ່ານ (ດ່ານຫ້ວຍໂກນ).

## (5) ການເຊື່ອມໂຍງໃນພາກພື້ນ

18. ຝ່າຍ ລາວ ເຫັນດີທີ່ຈະດຳເນີນການຕາມຜົນການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຂອງ ນາຍົກ ລັດຖະມົນຕີຂອງໄທ ໂດຍຈະເລັ່ງປະສານໜ່ວຍງານກ່ຽວຂ້ອງກ່ຽວກັບ ການເກັບຄ່າຜ່ານທາງ ໃນ ສປປ ລາວ ໃຫ້ເປັນລະບົບດຽວກັນ ຕາມຂໍ້ສະເໜີຂອງ ຝ່າຍໄທ.

19. ສອງຝ່າຍເຫັນດີທີ່ຈະແກ້ໄຂບັນຫາ ການຂົນສົ່ງສິນຄ້າໄທຜ່ານແດນຂອງ ລາວ ໄປຈີນຕອນໃຕ້ ຜ່ານເສັ້ນທາງ R3A ຊຶ່ງບໍ່ມີຄວາມຈະແຈ້ງໃນ ການເກັບຄ່າທໍານຽມ ແລະ ມີບໍລິສັດຂົນສົ່ງ (shipping) ທີ່ຜູກຂາດການຂົນສົ່ງສິນຄ້າຜ່ານແດນພຽງຜູ້ດຽວ ໂດຍຝ່າຍ ລາວ ຮັບທີ່ຈະນໍາມາຄົ້ນຄວ້າປຶກສາຫາລືເປັນເອກະພາບກັບພາກ ສ່ວນທີ່ກ່ຽວຂ້ອງແລ້ວແຈ້ງຜົນການດໍາເນີນການໃຫ້ຝ່າຍໄທຮັບຊາບຕໍ່ໄປ.

20. ຝ່າຍໄທແຈ້ງໃຫ້ຊາບວ່າ ສາມາດໃຫ້ສັດຕະຍາບັນຕໍ່ເອກະສານຊ້ອນທ້າຍ ແລະ ອະນຸສັນຍາ ທີ່ເຫລືອຢູ່ຈໍານວນ 06 ສະບັບ ພາຍໃຕ້ຂໍ້ຕົກລົງວ່າດ້ວຍການຂົນສົ່ງຜ່ານແດນໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ (Greater Mekong Subregion Cross-Border Transport Agreement – GMS CBTA) ໃຫ້ສໍາເລັດພາຍໃນປີນີ້. ໃນນີ້, ສອງຝ່າຍເຫັນດີທີ່ຈະເລັ່ງລັດໃນການຂະຫຍາຍເສັ້ນທາງຕາມເອກະສານເພີ່ມເຕີມ (Addendum) ໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການເລີ່ມຕົ້ນນໍາໃຊ້ຂໍ້ຕົກລົງ CBTA (MOU IICBTA) ລະຫວ່າງໄທ-ລາວ-ຫວຽດນາມ ໃຫ້ຈັດຕັ້ງປະຕິບັດໂດຍໄວ. ລວມເຖິງການເລັ່ງລັດການເຈລະຈາຫາລືເນື້ອໃນບົດບັນທຶກຄວາມເຂົ້າໃຈລະຫວ່າງ ໄທ-ລາວ-ຈີນ ໃນການເລີ່ມນໍາໃຊ້ຂໍ້ຕົກລົງວ່າດ້ວຍການອໍານວຍຄວາມສະດວກໃນການຂົນສົ່ງ ແລະ ຜູ້ໂດຍສານ ທີ່ດ່ານສາກົນຊຽງຂອງ-ຫ້ວຍຊາຍ ແລະ ດ່ານສາກົນບໍ່ເຕັນ-ບໍ່ຫານ, ຝ່າຍລາວຈະນໍາເອົາບັນຫາໄປປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ໃນການດໍາເນີນການຕາມຄວາມເໝາະສົມ.

21. ສອງຝ່າຍຈະຊຸກຍູ້ໃຫ້ມີການລວມເອົາເສັ້ນທາງ R8 ແລະ R12 ເຂົ້າຢູ່ໃນຂໍ້ຕົກລົງວ່າດ້ວຍການຂົນສົ່ງຜ່ານແດນໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ (CBTA) ພາຍໃຕ້ຂອບ GMS ແລະ ຊຸກຍູ້ໃຫ້ຂໍ້ຕົກລົງມີຜົນຈັດຕັ້ງປະຕິບັດໂດຍໄວເພື່ອອໍານວຍຄວາມສະດວກໃນການຂົນສົ່ງຜ່ານແດນລະຫວ່າງປະເທດ ສະມາຊິກ GMS ຫລາຍຂຶ້ນ.

22. ສອງຝ່າຍຈະປະສານກັບຂະແໜງການກ່ຽວຂ້ອງໃນການແກ້ໄຂບັນຫາການສົ່ງສິນຄ້າຜ່ານແດນຊຶ່ງມີຈຸດປະ ສົງເພື່ອອໍານວຍຄວາມສະດວກແກ່ການຂົນສົ່ງສິນຄ້າຜ່ານແດນ ເຊິ່ງກັນ ແລະ ກັນ.

III. <u>ການຮ່ວມມືເພື່ອການພັດທະນາເຂດເສດຖະກິດພິເສດ</u>

23. ອີງຕາມບົດບັນທຶກກອງປະຊຸມຄະນະກໍາມະທິການຮ່ວມວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 19 ໃນວັນທີ 22-24 ມັງກອນ 2015 ທີ່ນະຄອນຫຼວງວຽງຈັນ, ກອງປະຊຸມຮັບຊາບວ່າ ຝ່າຍໄທຈະສ້າງຕັ້ງເຂດພັດທະນາເສດຖະກິດພິເສດ ຢູ່ຈັງຫວັດມຸກດາຫານ ແລະ ຈັງຫວັດໜອງຄາຍ ແລະ ສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍປຶກສາຫາລືລາຍລະອຽດຮ່ວມກັນໃນການຮ່ວມມື ແລະ ສົ່ງເສີມການລົງທຶນ ລະຫວ່າງກັນ.

IV. ການສົ່ງເສີມການຄ້າ ແລະ ການລົງທຶນລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ

(1) ງານວາງສະແດງສິນຄ້າ.

24 ສອງຝ່າຍເຫັນວ່າການເຂົ້າຮ່ວມງານວາງສະແດງສິນຄ້າທີ່ແຕ່ລະຝ່າຍຈັດຂຶ້ນ ຈະຊ່ວຍສ້າງໂອກາດທາງດ້ານ ການຄ້າ ລະຫວ່າງກັນ ໂດຍຝ່າຍໄທແຈ້ງວ່າ ຜ່ານມາໄດ້ໃຫ້ການສະໜັບສະໜູນພາກລັດ ແລະ ພາກເອກະຊົນຂອງລາວ ໃນການເຂົ້າຮ່ວມງານວາງສະແດງສິນຄ້າສາກົນທີ່ກະຊວງພານິດຂອງໄທທີ່ຈັດຂຶ້ນໃນທຸກໆປີ ແລະ ເຫັນດີໃຫ້ການສະໜັບສະໜູນຕໍ່ໄປ ລວມເຖິງງານວາງສະແດງສິນຄ້າທີ່ຈະຈັດໃນແຂວງຕິດກັບຊາຍແດນຂອງໄທ ຄື ກັບທີ່ໄດ້ຈັດຜ່ານມາ ແລະ ສະແດງຄວາມຊົມເຊີຍຕໍ່ກັບຜົນສໍາເລັດຂອງການຮ່ວມມືດ້ານງານວາງສະແດງສິນຄ້າ ແລະ ການຈັດກິດຈະກໍາການຈັບຄູ່ທຸລະກິດ ໃນງານ Lao-Thai Trade Exhibition (Thailand Week) ປະຈໍາປີ 2014 ແລະ ງານ

"ມະຫາກຳການຄ້າລຸ່ມແມ່ນ້ຳຂອງ" ທີ່ໄດ້ຈັດຈຳນວນ 3 ຄັ້ງ ໃນປີ 2014. ນອກຈາກນີ້, ຝ່າຍໄທແຈ້ງວ່າ ໃນປີ 2015 ໄທມີແຜນຈະຈັດກິດຈະກຳໃນລັກສະນະດັ່ງກ່າວຢ່າງຕໍ່ເນື່ອງໂດຍຈະມີການຈັດງານ "ມະຫາກຳການຄ້າຊາຍແດນ" ໃນລະຫວ່າງວັນທີ 5-9 ມີນາ 2015 ທີ່ ຈັງຫວັດມຸກດາຫານ ແລະ ງານ Lao-Thai Trade Exhibition (Thailand Week) ປະຈຳປີ 2015 ລະຫວ່າງວັນທີ 6-10 ພຶດສະພາ 2015 ທີ່ນະຄອນຫຼວງວຽງຈັນ ແລະ ຂໍເຊີນໜ່ວຍງານພາກລັດ ແລະ ພາກເອກະຊົນຂອງ ລາວ ເຂົ້າຮ່ວມ.

25. ຝ່າຍລາວສະແດງຄວາມຂອບໃຈຕໍ່ກັບຝ່າຍໄທທີ່ໄດ້ໃຫ້ການຊ່ວຍເຫຼືອດ້ານຫ້ອງວາງສະແດງສິນຄ້າປະຈຳປີຢູ່ລາວ ທີ່ ນະຄອນຫຼວງວຽງຈັນ ແກ່ນັກທຸລະກິດລາວ ຈຳນວນ 50 ຫ້ອງ ໂດຍຝ່າຍໄທຍິນດີທີ່ຈະສືບຕໍ່ໃຫ້ການຊ່ວຍເຫຼືອໃນການສະໜັບສະໜູນຫ້ອງວາງສະແດງສິນຄ້າແກ່ນັກທຸລະກິດລາວຕໍ່ໄປ.

### (2) ການແລກປ່ຽນຂໍ້ມູນດ້ານການຄ້າ ແລະ ການລົງທຶນ

26. ສອງຝ່າຍເຫັນດີທີ່ຈະປະຕິບັດຕາມຜົນການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຂອງທ່ານນາຍົກລັດຖະມົນຕີແຫ່ງ ຣາຊະອານາຈັກໄທ ຊຶ່ງສອງຝ່າຍໄດ້ຕົກລົງໃຫ້ສຳນັກງານຄະນະກຳມະການສົ່ງເສີມການລົງທຶນ (BOI) ແລະ ໜ່ວຍງານການສົ່ງເສີມການລົງທຶນຂອງລາວປຶກສາຫາລືກັນໃນລາຍລະອຽດກ່ຽວກັບຂັ້ນຕອນການດຳເນີນງານການລົງທຶນໃຫ້ສະດວກວ່ອງໄວຂຶ້ນກວ່າເກົ່າ.

27. ສອງຝ່າຍເຫັນດີຈະເພີ່ມທະວີຮ່ວມມືໃນການປັບປຸງລະບົບການເກັບກຳຂໍ້ມູນສະຖິຕິການຄ້າລະຫວ່າງສອງປະເທດໃຫ້ດີຂຶ້ນກວ່າເກົ່າ.

28. ສອງຝ່າຍຮັບຊາບວ່າການລົງທຶນຂອງໄທໃນ ສປປ ລາວ ຕັ້ງແຕ່ປີ 1998-2014 ມີຈຳນວນ 665 ໂຄງການ ມູນຄ່າການລົງທຶນ 4,400 ລ້ານໂດລາສະຫາລັດ ແລະ ສະເພາະໃນປີ 2013-2014 ມີການລົງທຶນ ເພີ່ມຂຶ້ນ 7 ໂຄງການ ມູນຄ່າ 599 ລ້ານໂດລາສະຫາລັດ ຊຶ່ງເປັນອັນດັບສອງຮອງຈາກ ຈີນ.

29. ສອງຝ່າຍເຫັນດີທີ່ຈະຮ່ວມມືກັນໃນການສົ່ງເສີມການລົງທຶນລະຫວ່າງກັນໃຫ້ເພີ່ມຂຶ້ນ ແລະ ເຫັນໄດ້ຄວາມສຳຄັນຂອງການແລກປ່ຽນຂໍ້ມູນດ້ານລະບຽບທາງການຄ້າ ແລະ ການລົງທຶນຢ່າງປົກກະຕິ ແລະ ແຈ້ງໃຫ້ອີກຝ່າຍໜຶ່ງຊາບເມື່ອມີການປັບປຸງ ແລະ ການປ່ຽນແປງໂດຍຜ່ານທາງຜູ້ປະສານງານທັງສອງຝ່າຍ ຊຶ່ງໄດ້ແກ່ຫ້ອງການທີ່ປຶກສາດ້ານເສດຖະກິດ-ການຄ້າລາວ ປະຈຳ ປະເທດໄທ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແລະ ກົມນະໂຍບາຍການຄ້າຕ່າງ ປະເທດ (ຜູ້ປະສານງານຝ່າຍລາວ) ແລະ ສຳນັກງານສົ່ງເສີມການຄ້າລະຫວ່າງປະເທດ ນະຄອນຫຼວງວຽງຈັນ, ສຳນັກ ງານຄະນະກຳມະການສົ່ງເສີມການລົງທຶນ ແລະ ກົມເຈລະຈາການຄ້າລະຫວ່າງປະເທດ (ຜູ້ປະສານງານຝ່າຍໄທ) ລວມ ທັງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກງານພານິດຈັງຫວັດຊາຍແດນ ລາວ-ໄທ.

30. ສອງຝ່າຍເຫັນດີໃຫ້ມີການຮ່ວມມືລະຫວ່າງໜ່ວຍງານທີ່ກ່ຽວຂ້ອງໃນການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການລັກລອບໜີພາສີຕາມຊາຍແດນ ເພື່ອຮ່ວມກັນແກ້ໄຂ ແລະ ຊຸກຍູ້ໃຫ້ການຄ້າເຂົ້າສູ່ລະບົບຫຼາຍຂຶ້ນ.

## V. ການຮ່ວມມືທາງດ້ານການຄ້າ ແລະ ການລົງທຶນ

31. ຝ່າຍໄທສະເໜີຝ່າຍລາວປະສານກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບ ການເຮັດບົດບັນທຶກ ຄວາມເຂົ້າໃຈກ່ຽວກັບ ການຮ່ວມມືດ້ານຊັບສິນທາງປັນຍາ ( Memorandum of Understanding on Cooperation in

the areas of Intellectual Property) ລະຫວ່າງກົມຊັບສິນທາງປັນຍາໄທ ( ກະຊວງພານິດ) ແລະ ກົມຊັບສິນທາງປັນຍາລາວ (ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ) ໃຫ້ມີຜົນໃນທາງປະຕິບັດໂດຍໄວ ເພື່ອສົ່ງເສີມ ແລະ ພັດທະນາຄວາມຮ່ວມມືລະຫວ່າງສອງປະເທດໃນເລື່ອງຊັບສິນທາງປັນຍາບົນພື້ນຖານແຫ່ງມິດຕະພາບ ແລະ ຜົນປະໂຫຍດຮ່ວມກັນຂອງທັງສອງປະເທດ.

## VI. ການຮ່ວມມືດ້ານສິນຄ້າກະສິກຳ

32. ສອງຝ່າຍເຫັນໄດ້ຄວາມສຳຄັນຕໍ່ການສົ່ງເສີມໃຫ້ປະຊາຊົນຕາມເຂດຊາຍແດນໃຫ້ມີຊີວິດ ແລະ ການເປັນຢູ່ທີ່ດີຂຶ້ນ ໂດຍຝ່າຍໄທຈະສົ່ງເສີມ ແລະ ສະໜັບສະໜູນໃຫ້ຄວາມຮູ້ດ້ານວິຊາການ ການຜະລິດສິນຄ້າທີ່ໄດ້ ຄຸນນະພາບ, ມີມາດຕະຖານຮັບຮອງພາຍໃຕ້ບົດບັນທຶກຄວາມເຂົ້າໃຈລະຫວ່າງກະຊວງກະເສດຂອງໄທ ແລະ ກະຊວງກະສິກຳ ແລະ ປ່າໄມ້ຂອງລາວ ວ່າດ້ວຍການຮ່ວມມືດ້ານກະສິກຳ.

## VII. ການຮ່ວມມືດ້ານວິຊາການ

33. ສອງຝ່າຍຮັບຊາບຄວາມຄືບໜ້າການດຳເນີນງານຂອງໂຄງການ ICT ເພື່ອພັດທະນາລະບົບຖານຂໍ້ມູນການຄ້າ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ 5 ແຂວງຕົວແບບຂອງ ລາວ ( ນະຄອນຫຼວງວຽງຈັນ, ສະຫວັດນະເຂດ, ຈຳປາສັກ, ຫຼວງພະບາງ ແລະ ແຂວງຫຼວງນ້ຳທາ) ທີ່ມີເປົ້າໝາຍໃຫ້ສຳເລັດພາຍໃນປີ 2015 ພາຍໃຕ້ໂຄງການການຮ່ວມມືດ້ານວິຊາການລາວ-ໄທ ຊຶ່ງການດຳເນີນງານຂອງໂຄງການເປັນໄປຕາມແຜນທີ່ວາງໄວ້ໂດຍຝ່າຍໄທໄດ້ຈັດສົ່ງເຄື່ອງຄອມພິວເຕີ ແລະ ອຸປະກອນໃຫ້ກະຊວງອຸດສາຫະກຳ ແລະ ການຄ້າລາວ ໃນເດືອນ ກັນຍາ 2014. ປະຈຸບັນແມ່ນຢູ່ໃນໄລຍະການພັດທະນາ software ໂດຍຄາດວ່າໂຄງການຈະສຳເລັດພາຍໃນກາງປີ 2015. ພ້ອມກັນນີ້, ຝ່າຍໄທຂໍໃຫ້ຝ່າຍ ລາວ ອຳນວຍຄວາມສະດວກໃນການປ້ອນຂໍ້ມູນເຂົ້າສູ່ລະບົບຫລັງຈາກທີ່ພັດທະນາ software ສຳເລັດແລ້ວ ເພື່ອທີ່ຈະໄດ້ທົດລອງໃຊ້ ແລະ ປັບປຸງແກ້ໄຂລະບົບກ່ອນດຳເນີນງານຕົວຈິງຕໍ່ໄປ.

34. ຝ່າຍລາວ ສະແດງຄວາມຂອບໃຈຝ່າຍໄທທີ່ໃຫ້ການຊ່ວຍເຫລືອໃນການສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດໃຫ້ແກ່ ສປປ ລາວ ຕາມການສະເໜີໃນການຝຶກອົບຮົມ ສຳມະນາ ແລະ ທັດສະນະສຶກສາ ໃຫ້ແກ່ພະນັກງານພາກລັດ ແລະ ຜູ້ປະກອບການໃນ ລາວ ໃນປີຜ່ານມາ ປະກອບມີ: 1) ປະສົບການໃນການເຈລະຈາ FTA ຂອງໄທ; 2) ລະບົບການຈົດທະບຽນທຸລະກິດຂອງໄທ; 3) ການປະເມີນຄວາມສ່ຽງມາດຕະຖານ ແລະ ຄວາມປອດໄພ ຂອງສິນຄ້າກະສິກຳທີ່ນຳເຂົ້າມາຍັງປະເທດໄທ; 4) ການເຊື່ອມໂຍງ ແລະ ບໍລິຫານຈັດການລະບົບໂລຈິສະຕິກ ແລະ ການຂົນສົ່ງລະຫວ່າງປະເທດ ແລະ 5) ການຈັດການລະບົບໂລຈິສະຕິກ ແລະ ລະບົບຄັງສິນຄ້າ.

35. ຝ່າຍໄທຍິນດີພິຈາລະນາໃຫ້ການສະໜັບສະໜູນທຶນການສຶກສາໃຫ້ແກ່ຝ່າຍລາວ ໃນສາຂາທີ່ກ່ຽວຂ້ອງກັບການຄ້າ ແລະ ທຶນຝຶກອົບຮົມດ້ານຂະບວນການຜະລິດ ສິນຄ້າ OTOP/ODOP ເຊັ່ນ: ການສົ່ງເສີມທຸລະກິດຊຸມຊົນ ແລະ ຜູ້ປະກອບການ, ການບໍລິຫານຄຸ້ມຄອງກຸ່ມຜະລິດ ແລະ ປຸງແຕ່ງຜົນຜະລິດກະສິກຳ, ການຫຸ້ມຫໍ່ ແລະ ອື່ນໆ ຕາມຄວາມຕ້ອງການ ໂດຍຂໍໃຫ້ຝ່າຍລາວສົ່ງຄວາມຕ້ອງການຢ່າງເປັນທາງການຜ່ານກະຊວງການຕ່າງປະເທດ ລາວ.

36. ສອງຝ່າຍເຫັນດີໃນການເພີ່ມທະວີການພົວພັນຮ່ວມມືແລກປ່ຽນບົດຮຽນລະຫວ່າງບັນດາກົມຕ່າງໆຂອງກະ ຊວງອຸດສາຫະກຳ ແລະ ການຄ້າລາວ ແລະ ກະຊວງພານິດໄທ ໃຫ້ຫຼາຍຂຶ້ນ.

VIII. ການຮ່ວມມືລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກງານພານິດຈັງຫວັດຊາຍແດນ ລາວ-ໄທ

37. ສອງຝ່າຍຮັບຊາບຜົນກອງປະຊຸມແຜນການຮ່ວມມືລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກງານພານິດຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 06 ທີ່ຝ່າຍລາວເປັນເຈົ້າພາບຈັດຂຶ້ນໃນລະຫວ່າງວັນທີ 25-26 ມີນາ 2014 ທີ່ແຂວງຈຳປາສັກ, ສປປ ລາວ ແລະ ສະໜັບສະໜູນໃຫ້ມີກອງປະຊຸມດັ່ງກ່າວຢ່າງຕໍ່ເນື່ອງ ເພື່ອເສີມສ້າງສາຍສຳພັນລະຫວ່າງພະນັກງານດ້ານການຄ້າໃນລະດັບທ້ອງຖິ່ນໃຫ້ມີຄວາມແໜ້ນແຟ້ນຂຶ້ນຕື່ມ ແລະ ມອບໝາຍໃຫ້ເຈົ້າໜ້າທີ່ຂອງທັງສອງຝ່າຍປະສານງານສຳລັບການຈັດກອງປະຊຸມຄັ້ງທີ 7 ທີ່ຝ່າຍໄທຈະເປັນເຈົ້າພາບ.

IX . ການຮ່ວມມືພາກເອກະຊົນ

38. ຝ່າຍລາວຮັບຊາບວ່າສະພາຫໍການຄ້າແຫ່ງປະເທດໄທ ມີແຜນຈະຈັດສຳມະນາກ່ຽວກັບການສົ່ງເສີມການຄ້າ ແລະ ການທ່ອງທ່ຽວເສັ້ນທາງ 5 ແຍກເຊື່ອມໂຍງມໍລະດົກໂລກ ແລະ ອີສານເໜືອ, ນອກຈາກນີ້ ຍັງຈະມີການ ຈັດຄະນະຮ່ວມໜ່ວຍງານພາກລັດ ແລະ ເອກະຊົນເດີນທາງສຳຫຼວດເສັ້ນທາງທ່ອງທ່ຽວ ອຸດຣາຣະດິດ-ໄຊຍະບູລີ-ຫຼວງພະບາງ ໃນປີ 2015 ແລະ ຝ່າຍລາວ ຍິນດີທີ່ຈະປະສານງານເຊີນໜ່ວຍງານພາກລັດ ແລະ ພາກເອກະຊົນຂອງ ລາວເຂົ້າຮ່ວມ.

39. ສອງຝ່າຍເຫັນດີຊຸກຍູ້ ແລະ ສົ່ງເສີມໃຫ້ພາກເອກະຊົນຂອງທັງສອງຝ່າຍມີການພົບປະ ແລະ ຈັດກິດຈະກຳຮ່ວມກັນຢ່າງສະໜ່ຳສະເໝີ ແລະ ຮັບຊາບວ່າສະພາຫໍການຄ້າແຫ່ງປະເທດໄທ ຈະມີການຈັດງານວາງສະແດງສິນຄ້າຮ່ວມກັບສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ທີ່ຈັງຫວັດອຸດອນທານີ ໃນໄລຍະເດືອນກໍລະກົດ-ສິງຫາ 2015.

X. ບັນຫາອື່ນໆ

(1) ການຈັດເກັບພາສີຊື້ຂາຍພາຫະນະ (Sales-Purchase Tax)

40. ຝ່າຍໄທສະແດງຄວາມຍິນດີທີ່ໄດ້ຮັບຊາບວ່າ ສປປ ລາວ ໄດ້ມີການປັບປຸງກົດລະບຽບກ່ຽວກັບລະບົບການຈັດເກັບພາສີຊື້ຂາຍພາຫະນະ (Sales-Purchase Tax) ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງ ແລະ ພັນທະຂໍ້ຜູກພັນພາຍໃຕ້ອົງການການຄ້າໂລກ (WTO) ຊຶ່ງຈະມີຜົນບັງຄັບໃຊ້ພາຍໃນປີນີ້.

(2) ການຈັດເກັບຂໍ້ມູນທາງດ້ານການຄ້າ (National Trade Repository: NTR)

41. ສອງຝ່າຍແຈ້ງໃຫ້ຊາບວ່າປະຈຸບັນໄດ້ສ້າງເວັບໄຊ ຖານຂໍ້ມູນທາງການຄ້າຂອງຕົນ ຊຶ່ງລວບລວມຂໍ້ມູນທີ່ກ່ຽວ ຂ້ອງທາງດ້ານລະບຽບການທາງການຄ້າຂອງແຕ່ລະຝ່າຍຕາມ www.thailandntr.com ແລະ www. .laotradeportal.com ສອງຝ່າຍຈະແຈ້ງໃຫ້ໜ່ວຍງານພາກລັດ ແລະ ພາກເອກະຊົນ ຊາບເພື່ອໃຊ້ໃຫ້ເປັນປະໂຫຍດ ທັງນີ້ຈະໄດ້ເຊື່ອມໂຍງຖານຂໍ້ມູນທາງການຄ້າໃຫ້ເປັນ ASEAN Trade Repository (ATR) ຊຶ່ງມີຜົນບັງຄັບໃຊ້ພາຍໃນປີນີ້.

<u>ກຳນົດເວລາ ແລະ ສະຖານທີ່ຈັດກອງປະຊຸມແຜນການຮ່ວມມືລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ລາວ ແລະ ກະຊວງພານິດໄທ ຄັ້ງທີ 7</u>

42. ຝ່າຍ ລາວ ຍິນດີເປັນເຈົ້າພາບຈັດກອງປະຊຸມແຜນການຮ່ວມມືລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ຄັ້ງທີ 7, ທີ່ ສປປ ລາວ ໃນປີ 2016 ສຳລັບກຳນົດເວລາ ແລະ ສະຖານທີ່ຈັດກອງປະຊຸມ ສອງຝ່າຍຈະປະສານກັນພາຍຫຼັງ.

43. ສອງຝ່າຍສະແດງຄວາມຍິນດີຕໍ່ຜົນສຳເລັດຂອງການປະຊຸມ ແລະ ຢືນຢັນເຈດຈຳນົງ ທີ່ຈະສືບຕໍ່ການຂະຫຍາຍສາຍພົວພັນ ທາງດ້ານການຄ້າ ແລະ ການລົງທຶນຮ່ວມກັນ ເພື່ອການພັດທະນາ ແລະ ຮ່ວມກັນເຂົ້າປະຊາຄົມເສດຖະກິດອາຊຽນ. ໃນໂອກາດນີ້ ຫົວໜ້າຄະນະຝ່າຍລາວ ສະແດງຄວາມຂອບໃຈ ທີ່ຝ່າຍໄທໃຫ້ການຕ້ອນຮັບຢ່າງອົບອຸ່ນ ໃນການເຂົ້າຮ່ວມການປະຊຸມໃນຄັ້ງນີ້.

ເອກະສານຊ້ອນທ້າຍ 1

# ລາຍຊື່ຄະນະຜູ້ແທນຝ່າຍລາວ
# ໃນກອງປະຊຸມແຜນການຮ່ວມມືລະຫວ່າງກະຊວງອຸດສາຫະກໍາ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງ ພານິດແຫ່ງ ຣາຊະອານາຈັກໄທ ຄັ້ງ 6
# ໃນວັນທີ 05 ກຸມພາ 2015 ທີ່ໂຮງແຮມ ອິນເຕີຄອນຕິເນັນໂທ, ບາງກອກ, ປະເທດໄທ

| | | |
|---|---|---|
| 1. | ທ່ານ ນາງ ເຂັມມະນີ ພົມເສນາ<br>H.E. Khemmani PHOLSENA | ລັດຖະມົນຕີວ່າການ, ກະຊວງ ອຄ<br>Minister |
| 2. | ທ່ານ ບຸນສົມ ພົມມະວິຫານ<br>Mr. Bounsom PHOMMAVIHANE | ຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ<br>Director General, Foreign Trade Policy Department |
| 3. | ທ່ານ ນາງ ບານສະຕີ ເທບພະວົງ<br>Mrs. Banesaty THEPHAVONG | ຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ<br>Director General, Department of Import and Export. |
| 4. | ທ່ານ ສີສັງຄົມ ໂຄດໂຍທາ<br>Mr. Sysangkhom KHOTHYOTHA | ຮອງຫົວໜ້າກົມສົ່ງເສີມ ແລະ ພັດທະນາສິນຄ້າ<br>Deputy Director General, Trade and Product Promotion Department |
| 5. | ທ່ານ ນາງ ສຸພັນ ແກ້ວຄາເພັດ<br>Mrs. Souphanh KEOKHAMPHET | ທ່ານທີ່ປຶກສາຝ່າຍເສດຖະກິດ ແລະ ການຄ້າ ລາວ ປະຈໍາບາງກອກ<br>Economic and Commercial Counselor, Embassy of Lao PDR in Bangkok |
| 6. | ທ່ານ ເມກຄໍາ ສີລິຄູນ<br>Mr. Meckham SILYKHOUNE | ຫົວໜ້າພະແນກ, ກົມນະໂຍບາຍການຄ້າຕ່າງປະເທດ<br>Director, Foreign Trade Policy Department |
| 7. | ທ່ານ ອະພິສິດ ແສງສຸລິວົງ<br>Mr. Aphisid SENGSOURIVONG | ເລຂາ, ທ່ານ ລັດຖະມົນຕີວ່າການ<br>Secretary to the Minister |
| 8. | ທ່ານ ນາງ ຈິນສຸດາ ເພັດຈັນທະລາດ<br>Ms. Chinsouda PHETCHANTHARATH | ວິຊາການ, ກົມນະໂຍບາຍການຄ້າຕ່າງປະເທດ<br>Officer Foreign Trade Policy Department |
| 9. | ທ່ານ ຈັນທະຄອນ ອ່ອນມະນີສອນ<br>Mr. Chanthakhone ONEMANISONE | ເລຂານຸການຕີ (ການຄ້າ ແລະ ການລົງທຶນ)<br>Third Secretary (Trade and Investment) |

ເອກະສານຊ້ອນທ້າຍ 2

ລາຍຊື່ຄະນະຜູ້ແທນຝ່າຍໄທ
ໃນກອງປະຊຸມແຜນການຮ່ວມມືລະຫວ່າງກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ
ແລະ ກະຊວງ ພານິດແຫ່ງ ຣາຊະອານາຈັກໄທ ຄັ້ງ 6
ໃນວັນທີ 05 ກຸມພາ 2015 ທີ່ໂຮງແຮມ ອິນເຕີຄອນຕິເນັນໂຫ, ບາງກອກ, ປະເທດໄທ

**Ministry of Commerce**

| | |
|---|---|
| 1. ພົນເອກ ຊັດໄຊ ສາຣິກັນຍະ | ລັດຖະມົນຕີວ່າ ກະຊວງພານິດໄທ |
| H.E. General Chatchai Sarikulya | Minister of Commerce Head of Delegation |
| 2. ທ່ານ ນາງ ອະພິຣະດີ ຕັນຕຣາພອນ | ລັດຖະມົນຕີຊ່ວຍວ່າການ ກະຊວງພານິດໄທ |
| H.E. Mrs. Apiradi Tantraporn | Deputy Minister of Commerce |
| 3. ພົນເອກ ປັດຖະມະພົງ ປຣະຖົມພັດ | ລັດຖະມົນຕີຊ່ວຍວ່າການ ກະຊວງພານິດໄທ |
| General Patamapong Prathormpat | Vice Minister for Commerce |
| 4. ພົນເອກ ດິດທະພອນ ຊະຊະສະມິດ | ທີ່ປຶກສາລັດຖະມົນຕີວ່າການ ກະຊວງພານິດໄທ |
| General Ditthaporn Sasasmit | Advisor to the Minister of Commerce |

**Office of the Permanent Secretary**

| | |
|---|---|
| 5. ທ່ານ ນາງຊຸຕິມາ ບຸນຍະປຣະພັດສອນ | ປະລັດ ກະຊວງພານິດໄທ |
| Miss Chutima Bunyapraphasara | Permanent Secretary |

**Department of Trade Negotiations**

| | |
|---|---|
| 6. ທ່ານ ນາງ ສິຣິນາດ ໃຈໝັ້ນ | ຮອງອະທິບໍດີ ກົມເຈລະຈາການຄ້າລະຫວ່າງປະເທດ |
| Ms. Sirinart Chaimun | Deputy Director General |
| 7. ທ່ານ ນາງ ອະຣຸນີ ພູນແກ້ວ | ຜູ້ອຳນວຍການສຳນັກອາຊຽນ |
| Ms. Arunee Poolkaew Executive Director | |
| 8. ທ່ານ ນາງ ສິຣິຣັດ ລິ້ມພົງ | ຜູ້ອຳນວຍການສ່ວນບໍລິຫານທະວິພາຄີ |
| Ms. Sirirat Limpong | Director |
| 9. ທ່ານ ນຸດຈາຣີ ສົມພົງ | ວິຊາການພານິດຊຳນານການພິເສດ |
| Ms. Nudjaree Sompong | Trade Officer (Senior Professional Level) |

| | |
|---|---|
| 10. ທ່ານ ນາງ ສຸປຣານີ ກ້ອງກຽດກະມົນ | ວິຊາການພານິດຊຳນານການ |
| Ms. Supranee Kongkiatkamon | Trade Officer (Professional Level) |
| 11. ທ່ານ ວະໂຣດ ຊະຕະເສວີ | ວິຊາການພານິດປະຕິບັດການ |
| Mr. Warot Chatasewee | Trade Officer (Practitioner Level) |

**Department of Foreign Trade**

| | |
|---|---|
| 12. ທ່ານ ນາງ ປານຈິດ ພິຊະວົງ | ຮອງອະທິບໍດີ ກົມການຄ້າຕ່າງປະເທດ |
| Miss Panjit Pisawong | Deputy Director General |
| 13. ທ່ານ ນາງ ວິໄລວັນ ຕາບວົງສີຣິ | ວິຊາການພານິດຊ່ຽວຊານ |
| Mrs.Vilaivan Tapwongsri | Trade Officer (Expert Level) |
| 14. ທ່ານ ນາງ ກັນນິກາ ເກີດປະດິດ | ວິຊາການພານິດ ຊຳນານການພິເສດ |
| Miss Kanika Kurdpradit | Trade Officer (Senior Professional Level) |
| 15. ທ່ານ ນາງ ພົງຣັດດາ ບຸດໂຕ | ວິຊາການພານິດ ຊຳນານການ |
| Miss Pongratda Bootto | Trade Officer (Professional Level) |
| 16. ທ່ານ ຖະເນດ ເຈຍະເສນານົນ | ວິຊາການພານິດ ຊຳນານການ |
| Mr. Thanej Jayasananon | Trade Officer (Professional Level) |

**Department of International Trade Promotion**

| | |
|---|---|
| 17. ທ່ານ ນາງ ນະຣັດຊະທາ ພິສິດກະເສມ | ວິຊາການພານິດ ຊຳນານການພິເສດ |
| Mrs. Naratchata Pisitkasem | Trade Officer (Senior Professional Level) |
| 18. ທ່ານ ນາງ ສິຣິການ ອຳມາດໄຕຍະກຸນ | ວິຊາການພານິດຊຳນານການ |
| Mrs. Sirikarn Amatayakul | Trade Officer (Professional Level) |

**Ministry of Finance**

**The Customs Department**

| | |
|---|---|
| 19. ທ່ານ ຍຸດທະນາ ຫຍິມກາຣຸນ | ຮອງອະທິບໍດີກົມສຸລະກາກອນ ຮັກສາການໃນຕຳແໜ່ງທີ່ປຶກສາ |
| Mr. Yuttana Yimgarund | Deputy Director General Principal Advisor on Customs Control Development |
| 20. ທ່ານ ສຸວັດ ດ້ວງປັ້ນ | ຜູ້ອຳນວຍການສຳນັກງານສຸລະກາກອນ ພາກທີ 2 |
| Mr. Suwat Daunapan | Director of Regional Customs Office II |

| | |
|---|---|
| 21. ທ່ານ ສົມຍົດ ກັນແຕງ<br>Mr. Somyot Kantang | ນາຍດ່ານສຸລະກາກອນທຸ່ງຊ້າງ<br>Head of thung Chang Customs House |

**Fiscal Policy Office**

| | |
|---|---|
| 22. ທ່ານ ນາງ ນັດທະຍາ ອັດຊະນາກອນລັກ<br>Mrs. Nuttaya Achakornlak | ຜູ້ອຳນວຍການສ່ວນຄວາມຮ່ວມມືອາຊຽນ ແລະ ອະນຸພູມີພາກ<br>Director, ASEAN and Subregion Cooperation Division |
| 23. ທ່ານ ທະນະກອນ ໂສພົນວິດ<br>Mr. Thanakorn Sophonwit | ເສດຖະສາດປະຕິບັດການ<br>Economist |

## ເອກະສານຊ້ອນທ້າຍ 3

## ບັນຊີຫົວຂໍ້ຝຶກອົບຮົມ ແລະ ທັດສະນະສຶກສາແລກປ່ຽນຖອດຖອນບົດຮຽນ ເພື່ອຂໍສະເໜີຂໍການຊ່ວຍເຫຼືອຈາກຝ່າຍໄທໃນປີ 2014-2015

1. ຫົວຂໍ້ຝຶກອົບຮົມ

| ລ/ດ | ຫົວຂໍ້ຝຶກອົບຮົມລຳມະນາ | ດ້ານສາຂາ | ວັດຖຸປະສົງ/ເປົ້າໝາຍ | ສະຖານທີ່ຈັດກິດຈະກຳ | ໜ່ວຍງານຮັບຜິດຊອບ | | ໄລຍະເວລາຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | | | | ສປປ ລາວ | ໄທ | |
| 1 | ການຈົດລິຂະສິດເຄື່ອງໝາຍການຄ້າຫັດຖະກຳ | ການສົ່ງເສີມ ການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານ ເສດຖະກິດ ແລະ ການຄ້າ | ໄທ | ກົມອຸດສາຫະກຳ | ສະພາສົ່ງເສີມອຸດສາຫະກຳ | |
| 2 | ການຄຸ້ມຄອງການໄຫຼວຽນຢ່າງເສລີຂອງສິນຄ້າ ແລະ ໂຮງງານໃນປະຊາຄົມເສດຖະກິດອາຊຽນ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວໃນດ້ານ ເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 3 | ການອຳນວຍຄວາມສະດວກດ້ານການຄ້າສອງຝ່າຍ, ຖອດຖອນບົດຮຽນປະສົບການໃນການເຮັດສັນຍາການຄ້າເສລີຂອງໄທ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານ ເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 4 | ຝຶກອົບຮົມເພື່ອຈັດຕັ້ງກຸ່ມຜະລິດ, ກຸ່ມຈຳໜ່າຍ ແລະ ບໍລິການ, ການບໍລິການການພັດທະນາທຸລະກິດ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານ ເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 5 | ການສ້າງນິຕິກຳຂອງວຽກງານຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກຳປຸງແຕ່ງ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານ ເສດຖະກິດ ແລະ ການຄ້າ | ກົມໂຮງງານ ແລະ ກົມສົ່ງເສີມອຸດສາຫະກຳ, ກະຊວງ ອຄ ໄທ | ກົມ ອຸດສາຫະກຳ | | 5 ວັນ |
| 6 | ຍົກລະດັບວິຊາສະເພາະໃນການຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກຳປຸງແຕ່ງ, ຄຸ້ມຄອງກວດກາທາງດ້ານສິ່ງແວດລ້ອມອຸດສາຫະກຳປຸງແຕ່ງ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານ ເສດຖະກິດ ແລະ ການຄ້າ | ມະຫາວິທະຍາໄລຂອນແກ່ນແລະຊຽງໃໝ່ | ກົມ ອຸດສາຫະກຳ | | |
| 7 | ວຽກງານກວດກາການຄ້າ ຫຼື ຄຸ້ມຄອງການຕະຫຼາດ, ການຄຸ້ມຄອງລາຄາສິນຄ້າ,ວິໃຈຕະຫຼາດ ແລະ ການປົກປ້ອງຜູ້ຊົມໃຊ້ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານ ເສດຖະກິດ ແລະ ການຄ້າ | ໄທ | ກົມການຄ້າພາຍໃນ | | 4 ອາທິດ |

| | | | | | | | |
|---|---|---|---|---|---|---|---|
| 8 | ວິທີການຫຸ້ມຫໍ່ ແລະ ວິທີການແປຮູບຜະລິດຕະພັນ ODOP, ການແປຮູບສິນຄ້າກະສິກຳລາວ, ການບໍລິຫານຄຸ້ມຄອງກຸ່ມຜະລິດ ແລະ ປຸງແຕ່ງຜົນຜະລິດກະສິກຳ, ການສົ່ງເສີມການຜະລິດເປັນສິນຄ້າ, ວຽກງານຫັດຖະກຳ-ຈັກສານ, ວິທີປູກພືດປອດສານພິດ, | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ນະຄອນພະນົມ | ກົມນະໂຍບາຍການຄ້າ | | 21-26 ມິຖຸນາ 2015 |
| 9 | ການພັດທະນາຕະຫຼາດ ແລະ ຂະຫຍາຍຕາໜ່າງການຄ້າ, ການສົ່ງເສີມການເຂົ້າເຖິງຕະຫຼາດ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ຈັງຫວັດຊຽງໃໝ່ | ກົມນະໂຍການຄ້າຕ່າງປະເທດ | | 4-8 ພຶດສະພາ 2015 |
| 10 | ການເກັບກຳຕົວເລກສະຖິຕິໂຮງງານອຸດສາຫະກຳ ແລະ ຫັດຖະກຳ, ຕົວເລກການຜະລິດ ແລະ ຈຳໜ່າຍຜະລິດຕະພັນ. | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ພະແນກ ອຄ ຄຳມ່ວນ | ກົມນະໂຍການຄ້າຕ່າງປະເທດ | | |
| 11 | ການຕິດຕັ້ງ ແລະ ຄຸ້ມຄອງລະບົບ Server "Installation using and Resolutions Networks computer and server", ຝຶກອົບຮົມດ້ານ ໄອທີ ໃນການສ້າງຖານຂໍ້ມູນການຄ້າ, ການສ້າງເວັບໄຊ, E-Commerce | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍການຄ້າຕ່າງປະເທດ | | 3 ອາທິດ (ມັງກອນ-ກຸມພາ 2015) |
| 12 | ການຄຸ້ມຄອງໂຄງການທີ່ສົ່ງເສີມວິຊາການໃຫ້ແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ (ວນກ) | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍການຄ້າຕ່າງປະເທດ | | ມິຖຸນາ-ກໍລະກົດ 2015 |
| 13 | ການຄຸ້ມຄອງໂຄງການທີ່ສະໜອງທຶນໃຫ້ແກ່ ວນກ, ນະໂຍບາຍການສົ່ງເສີມ ວນກ ຂອງ ປະເທດໄທ, ນະໂຍບາຍດ້ານພາສີອາກອນ ຕໍ່ ວນກ ຂອງໄທ, ການຄຸ້ມຄອງໂຄງການທີ່ສົ່ງເສີມວິຊາການໃຫ້ແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ (ວນກ) | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກົມນະໂຍການຄ້າຕ່າງປະເທດ | | ມິຖຸນາ-ກໍລະກົດ 2015 |
| 14 | ການຄຸ້ມຄອງ ແລະ ບໍລິຫານຈັດການຈັດງານວາງສະແດງສິນຄ້າ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມສົ່ງເສີມ ແລະ ພັດທະນາສິນຄ້າ | DITP | 3 ວັນ |

| | | | | | | | |
|---|---|---|---|---|---|---|---|
| 15 | ຂັ້ນຕອນ ແລະ ຂະບວນການໃນການເຈາະຕະຫຼາດຂອງສິນຄ້າໄທສູ່ ສາກົນ, ການສ້າງກົນໄກໃນການປະສານງານ, ການເກັບກຳສະຖິຕິນຳເຂົ້າ-ສົ່ງອອກສິນຄ້າ (ໂດຍສະເພາະແມ່ນການເກັບກຳສະຖິຕິການຄ້າຊາຍແດນ) ແລະ ການວິເຄາະສະພາບນຳເຂົ້າ ແລະ ສົ່ງອອກສິນຄ້າ. | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມສົ່ງເສີມ ແລະ ພັດທະນາສິນຄ້າ | DITP | 3 ວັນ |
| 16 | ການຄຸ້ມຄອງການຄ້າຊາຍແດນ ແລະ ຕະຫຼາດຊາຍແດນຂອງໄທ ກັບປະເທດເພື່ອນບ້ານ ແລະ ວິໄສທັດຂອງການຄ້າຊາຍແດນໄທ ພາຍຫຼັງເຂົ້າປະຊາຄົມເສດຖະກິດອາຊຽນ, ການນຳໃຊ້ມາດຕະການຕ່າງໆກ່ຽວກັບ ການນຳເຂົ້າ-ສົ່ງອອກສິນຄ້າຂອງໄທ. | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມການນຳເຂົ້າ ແລະ ສົ່ງອອກ | | |
| 17 | ການນຳໃຊ້ soft ware ທີ່ມີລັກສະນະເຊື່ອມຕໍ່ກັນ ໃນການບັນທຶກຂໍ້ມູນນຳເຂົ້າ-ສົ່ງອອກສິນຄ້າຂອງໄທ, ວຽກງານການອຳນວຍຄວາມສະດວກທາງດ້ານການຄ້າເຊັ່ນ: ລະບົບ paperless, Automation management, Single Window, E-Co, E-Licensing | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມການນຳເຂົ້າ ແລະ ສົ່ງອອກ | | |

## 2. ຫົວຂໍ້ການທັດສະນະສຶກສາແລກປ່ຽນຖອດຖອນບົດຮຽນ

| ລ/ດ | ຫົວຂໍ້ຝຶກອົບຮົມສຳມະນາ | ດ້ານສາຂາ | ວັດຖຸປະສົງ/ເປົ້າໝາຍ | ສະຖານທີ່ຈັດກິດຈະກຳ | ໜ່ວຍງານຮັບຜິດຊອບ | | ໄລຍະເວລາຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | | | | ສປປ ລາວ | ໄທ | |
| 1 | ວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 2 | ວຽກງານການບໍລິຫານຈັດການຕະຫຼາດປະເພນີ, ຕະຫຼາດຮູບແບບໃໝ່ທີ່ທັນສະໄໝ, ຫ້າງຊຸບພະສິນຄ້າ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 3 | ການຄຸ້ມຄອງສິນຄ້າຜ່ານແດນ, ການນຳເຂົ້າ ແລະ ສົ່ງອອກສິນ ຄ້າທີ່ຂະແໜງການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າເກືອດຫ້າມຂອງໄທ. | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 4 | ການທັດສະນະສຶກສາ ກ່ຽວກັບການຄຸ້ມຄອງໂຮງງານຫັດຖະ ກຳ ແລະ ນາຍຊ່າງຫັດຖະກຳ, ວຽກງານການແກະສະລັກທີ່ໂດດເດັ່ນ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 5 | ທັດສະນະສຶກສາໂຮງງານອຸດສາຫະກຳທີ່ໄດ້ມາດຕະຖານຂອງໄທ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ບາງກອກ, ໄທ | ກົມອຸດສາຫະກຳ | | 15 ວັນ |
| 6 | ວຽກງານກວດກາການຄ້າ ຫຼື ຄຸ້ມຄອງການຕະຫຼາດ, ການຄຸ້ມຄອງລາຄາສິນຄ້າ,ວິໃຈຕະຫຼາດ ແລະ ການປົກປ້ອງຜູ້ຊົມໃຊ້, ການວິໄຈພະຍາກອນສະພາບລາຄາ-ສິນຄ້າ, ການສະໜອງ ແລະ ຄວາມຕ້ອງການຂອງສິນ ຄ້າກະສິກຳ, ອຸປະໂພກ-ບໍລິ ໂພກ, ສິນຄ້າອຸດສາ ຫະກຳ(ບັນດາຕົວເລກຊີ້ວັດເສດຖະກິດທີ່ນອນ ຢູ່ໃນຄວາມຮັບຜິດຊອບຂອງກະຊວງພານິດ), ທັດສະນະສຶກສາກ່ຽວກັບ ວິທີການກວດກາສັນຄ້າຕາມທ້ອງຕະຫຼາດ, ວຽກງານຕິດຕາມລາຄາ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມການຄ້າພາຍໃນ, ກົມນະໂຍບາຍການຄ້າຕ່າງປະເທດ | | 4 ອາທິດ |

| | | | | | | | |
|---|---|---|---|---|---|---|---|
| | ສິນຄ້າ ແລະ ວຽກງານການຄົ້ນຄວ້າ, ວິໄຈ ແລະ ພະຍາກອນສິນຄ້າ-ລາຄາ, | | | | | | |
| 7 | ການພັດທະນາການຄ້າ ແລະ ການຄຸ້ມຄອງທຸລະກິດການຄ້າຂາຍຍົກ-ຂາຍຍ່ອຍ ແລະ ການຄຸ້ມຄອງລາຄາສິນຄ້າໃນເງື່ອນໄຂເຊື່ອມໂຍງເສດຖະກິດ ກັບ ພາກພື້ນ ແລະ ສາກົນ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມການຄ້າພາຍໃນ, ກົມນະໂຍບາຍການຄ້າຕ່າງປະເທດ | | 4 ອາທິດ |
| 8 | ທັດສະນະສຶກສາແລກປ່ຽນວຽກງານທະບຽນ ແລະ ຄຸ້ມຄອງວິສາຫະກິດ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ກົມພັດທະນາທຸລະກິດ, ກະຊວງພານິດໄທ. | ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກົມນະໂຍບາຍການຄ້າຕ່າງປະເທດ | | 1 ອາທິດ |
| 9 | ວຽກງານການເກັບກຳສະຖິຕິນຳເຂົ້າ-ສົ່ງອອກສິນຄ້າ ແລະ ວຽກງານການຄ້າຊາຍແດນ, ການຄຸ້ມຄອງການຄ້າຊາຍແດນໄທ-ກຳປູເຈຍ, ໄທ-ມຽນມາ ແລະ ວິໄສທັດການຄ້າຊາຍແດນຂອງໄທ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມການນຳເຂົ້າ ແລະ ສົ່ງອອກ, ກົມນະໂຍບາຍການຄ້າຕ່າງປະເທດ | | |
| 10 | ການພັດທະນາຕະຫຼາດ ແລະ ຂະຫຍາຍຕາໜ່າງການຄ້າ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ຈັງຫວັດຊຽງໃໝ່ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 11 | ການສ້າງຕັ້ງສູນສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ກາງ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | |
| 12 | ການເຂົ້າຫາຕະຫຼາດຂອງຫົວໜ່ວຍທຸລະກິດ OTOP ໃນຍຸກ AEC, ການເຂົ້າຫາຕະຫຼາດຂອງຜະລິດຕະພັນປອດສານພິດໃນຍຸກ AEC | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | 20-24 ເມສາ 2015 |
| 13 | ການຄ້ຳປະກັນສິນເຊື່ອຂອງພາກລັດ ເພື່ອຊ່ວຍໃຫ້ທຸລະກິດ | ການສົ່ງເສີມການ | ເພີ່ມຂີດຄວາມສາມາດຂອງ ສ | ໄທ | ກົມນະໂຍບາຍ | | 11-15 |

| | | | | | | | |
|---|---|---|---|---|---|---|---|
| | ເຂົ້າເຖິງແຫຼ່ງທຶນ | ຄ້າ | ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | | ການຄ້າຕ່າງປະເທດ | | ພຶດສະພາ 2015 |
| 14 | ການຍົກລະດັບເຕັກໂນໂລຊີໃຫ້ແກ່ອຸດສາຫະກຳພື້ນເມືອງ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | 6-10 ກໍລະກົດ 2015 |
| 15 | ການກໍ່ສ້າງຜູ້ປະກອບກິດຈະການໃໝ່ໃນຍຸກ AEC | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | 17-21 ສິງຫາ 2015 |
| 16 | ຖອດຖອນບົດຮຽນກ່ຽວກັບການຈັດລຳດັບ SME ດີເດັ່ນຂອງປະເທດໄທ, ທັດສະນະສຶກສາວຽກງານຂອງ ສຳນັກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (OSMEP), ແລກປ່ຽນບົດຮຽນກ່ຽວກັບການຮ່ວມມືລະຫວ່າງ ວິສາຫະກິດຂະໜາດໃຫຍ່ ແລະ SME, ຖອດຖອນບົດຮຽນດ້ານສົ່ງເສີມພັດທະນາທຸລະກິດຂະໜາດນ້ອຍ,ຂະໜາດກາງ | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມນະໂຍບາຍການຄ້າຕ່າງປະເທດ | | ພຶດສະພາ 2015 |
| 17 | ການບໍລິຫານສູນປະຊຸມ ແລະ ສູນວາງສະແດງ, ການບໍລິຫານຈັດການຂອງກົມ DITP (ໂດຍລົງເລິກແຕ່ລະພະແນກ) | ການສົ່ງເສີມການຄ້າ | ເພີ່ມຂີດຄວາມສາມາດຂອງ ສປປ ລາວໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມສົ່ງເສີມ ແລະ ພັດທະນາສິນຄ້າ, ກົມນະໂຍບາຍການຄ້າຕ່າງປະເທດ | DITP | 5 ວັນ |
| 18 | ການຄຸ້ມຄອງການຄ້າຊາຍແດນ ໄທ-ມຽນມາ ແລະ ໄທ-ກຳປູເຈຍ, ວຽກງານການອຳນວຍຄວາມສະດວກທາງດ້ານການຄ້າເຊັ່ນ: ລະບົບ Single Window, E-Co, E-Licensing | ການສົ່ງເສີມການຄ້າ | ເພີ່ມຂີດຄວາມ ສາມາດຂອງ ສ ປປ ລາວ ໃນດ້ານເສດຖະກິດ ແລະ ການຄ້າ | ໄທ | ກົມການນຳເຂົ້າ ແລະ ສົ່ງອອກ, ກົມນະໂຍບາຍການຄ້າຕ່າງປະເທດ | | |